ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------------

ກະຊວງສຶກສາທິການ ແລະກິລາ

ເລກທີ: 892 /..ສສກ

**Regulation on Smoke Free Work Places of Education and Sport Sector**

ນະຄອນຫຼວງວຽງຈັນ, ວັນທີ 22 JUN 2012

# ຂໍ້ກຳນົດກ່ຽວກັບ
# ການສ້າງເຂດປອດຄວັນຢາສູບຂອງຂະແໜງການສຶກສາທິການ ແລະກິລາ

- ອີງຕາມ ກົດໝາຍວ່າດ້ວຍການຄວບຄຸມຢາສູບ ສະບັບເລກທີ 07/ສພຊ, ລົງວັນທີ 26 ພະຈິກ 2009;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງສຶກສາທິການ ແລະກິລາ ສະບັບເລກທີ 282/ນຍ, ລົງວັນທີ 07/09/2011;
- ອີງຕາມ ຄູ່ມືໃນການຈັດຕັ້ງປະຕິບັດມາດຕາ 8 ຂອງສົນທິສັນຍາຂອງອົງການອະນາໄມໂລກວ່າດ້ວຍການຄວບຄຸມຢາສູບ;
- ອີງຕາມ ດຳລັດວ່າດ້ວຍການຫ້າມໂຄສະນາ ສົ່ງເສີມການບໍລິໂພກ ຜະລິດຕະພັນຢາສູບ ສະບັບເລກທີ 369/ນຍ, ລົງວັນທີ 23/08/2010;
- ອີງຕາມ ການສະເໜີຂອງຫ້ອງການກະຊວງສຶກສາທິການ ແລະກິລາ ສະບັບເລກທີ / , ລົງວັນທີ...../.../2012.

## ລັດຖະມົນຕີວ່າການກະຊວງສຶກສາທິການ ແລະກິລາ ອອກຂໍ້ກຳນົດ:

## <u>ໝວດທີ 1</u>

## ຫຼັກການທົ່ວໄປ

**ມາດຕາ 1. ຈຸດປະສົງ ແລະລະດັບຄາດໝາຍ**

1. ຈຸດປະສົງ:

ຂໍ້ກຳນົດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການຕ່າງໆ ເພື່ອສ້າງໃຫ້ສະຖານທີ່ຂອງຂະແໜງການສຶກສາທິການ ແລະກິລາ ປອດຄວັນຢາສູບ, ໂດຍສະເພາະສະຖານທີ່ການສຶກສາ ແລະກິລາ ທັງພາກລັດ ແລະເອກະຊົນ ເພື່ອເປັນແບບຢ່າງ ແລະປູກຈິດ

ສຳນຶກທີ່ດີໃຫ້ແກ່ນັກຮຽນ, ນັກສຶກສາທັງເປັນການປົກປ້ອງສຸຂະພາບຂອງຜູ້ບໍ່ສູບຢາ ໃນນັ້ນ ລວມທັງ ແມ່ຍິງທີ່ກຳລັງຖືພາ ແລະເດັກ ພ້ອມກັນນັ້ນ ການບໍ່ສູບຢາກໍຍັງເປັນການສ້າງຄ່ານິຍົມ ແລະວັດທະນະທຳແບບໃໝ່ທີ່ທັນສະໄໝ.

2. **ລະດັບຄາດໝາຍ:**

ຄາດໝາຍຂອງການອອກຂໍ້ກຳນົດສະບັບນີ້ແມ່ນເພື່ອ:

- ເຮັດໃຫ້ສະຖານທີ່ຂອງຂະແໜງການສຶກສາທັງໝົດທັງພາກລັດ ແລະເອກະຊົນ, ພາຫະນະຂົນສົ່ງບຸກຄະລາກອນດ້ານການສຶກສາ ແລະກິລາໃຫ້ປອດຄວັນຢາສູບ;
- ເຮັດໃຫ້ຂະແໜງການສຶກສາ ຊຶ່ງເປັນບ່ອນສ້າງໜໍ່ແໜງ ແລະເບົ້າຫຼໍ່ຄົນລຸ້ນໃໝ່ຂອງຊາດໃຫ້ເປັນແບບຢ່າງທີ່ດີດ້ວຍການສ້າງສິ່ງແວດລ້ອມສະອາດ, ມີອາກາດສົດໃສ ແລະປາສະຈາກມົນລະພິດທາງອາກາດ.

3. **ຂອບເຂດນຳໃຊ້ຂໍ້ກຳນົດ**

ຂໍ້ກຳນົດສະບັບນີ້ ມີຂອບເຂດການນຳໃຊ້ທົ່ວຂະແໜງການສຶກສາທິການ ແລະກິລາ ທີ່ລະບຸໄວ້ໃນມາດຕາ 3 ຂອງຂໍ້ກຳນົດສະບັບນີ້.

**ມາດຕາ 2. ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ກຳນົດສະບັບນີ້ມີຄື:

1. **"ການໄດ້ຮັບຄວັນຢາສູບ"** ໝາຍເຖິງ ຜູ້ບໍ່ສູບຢາໄດ້ຮັບຄວັນທີ່ພົ່ນອອກມາຈາກຜູ້ສູບຢາ ຫຼື ຄວັນອອກຈາກກອກຢາທີ່ຈູດປະໄວ້.
2. **"ອາກາດປອດຄວັນຢາສູບ"** ໝາຍເຖິງ ອາກາດທີ່ປາສະຈາກຄວັນຢາສູບ 100%.
3. **"ການສູບຢາ"** ໝາຍເຖິງ ການສູບເອົາຄວັນຢາເຂົ້າ ແລະ ພົ່ນຄວັນອອກ.
4. **"ສະຖານທີ່ການສຶກສາ ແລະກິລາ"** ໝາຍເຖິງ ຂອບເຂດທົ່ວຂະແໜງການສຶກສາທິການ ແລະກິລາ ລວມທັງ ກະຊວງສຶກສາທິການ ແລະ ກິລາ, ພະແນກສຶກສາທິການ ແລະກິລາແຂວງ, ນະຄອນຫຼວງ, ຫ້ອງການສຶກສາທິການ ແລະກິລາເມືອງ, ເຮືອນລ້ຽງເດັກຈົນຮອດມະຫາວິທະຍາໄລ ທັງພາກລັດ ແລະເອກະຊົນ, ໂຮງຮຽນ, ຫ້ອງຮຽນ, ຫ້ອງທົດລອງ, ຫໍສະໝຸດ, ສະໂມສອນ, ຫ້ອງລໍຖ້າ, ຫ້ອງປະຊຸມ, ຫ້ອງຈັດກິດຈະກຳຕ່າງໆ, ໃນນັ້ນໃຫ້ລວມເອົາທັງລະບຽງ, ຂັ້ນໄດ, ລິຟ, ຂັ້ນໄດເລື່ອນ, ສະໜາມກິລາທັງໃນຮົ່ມ ແລະກາງແຈ້ງ, ສູນຝຶກກິລາ, ພາຫະນະຂົນສົ່ງ ບຸກຄະລາກອນດ້ານການສຶກສາ ແລະນັກຮຽນ, ຫໍອາຫານ ແລະຮ້ານກິນດື່ມຂອງສະ

ຖານທີ່ການສຶກສາ ແລະກິລາ, ຫໍພັກ, ຫ້ອງນ້ຳ ແລະສະຖານທີ່ອື່ນໆຂອງຂະແໜງການສຶກສາທິການ ແລະກິລາ.

## <u>ໝວດທີ 2</u>

## ການກຳນົດສະຖານທີ່ຫ້າມສູບຢາຂອງຂະແໜງການສຶກສາທິການ ແລະກິລາ

**ມາດຕາ 3. ການກຳນົດເຂດຫ້າມສູບຢາ**

ສະຖານທີ່ຫ້າມສູບຢາທຸກປະເພດ ມີດັ່ງນີ້:

1. ສຳນັກງານ, ຫ້ອງການຂອງຂະແໜງການສຶກສາທິການ ແລະກິລາ, ສະຖານທີ່ການສຶກສາ ເຊັ່ນ: ມະຫາວິທະຍາໄລ, ໂຮງຮຽນວິຊາຊີບ ແລະສາມັນສຶກສາທຸກລະດັບ ລວມທັງສະໜາມກິລາ, ສູນເຝິກ ທັງພາກລັດ ແລະເອກະຊົນ

2. ສະຖານທີ່ອື່ນໆທີ່ມີປ້າຍຫ້າມສູບຢາ ແລະສະຖານທີ່ປອດຄວັນຢາສູບ

**ມາດຕາ 4. ການກຳນົດປ້າຍຫ້າມສູບຢາ**

ບັນດາສະຖານທີ່ ທີ່ລະບຸໄວ້ໃນມາດຕາ 3 ຂອງຂໍ້ກຳນົດສະບັບນີ້ ຕ້ອງຕິດປ້າຍທີ່ສາມາດອ່ານໄດ້ໃນໄລຍະ ສິບ ແມັດຂຶ້ນໄປ, ໂດຍລະບຸເນື້ອໃນ ຫຼື ຂໍ້ຄວາມ ດັ່ງຕໍ່ໄປນີ້:

**1. ເຄື່ອງໝາຍ ແລະການຕິດເຄື່ອງໝາຍຂອງເຂດຫ້າມສູບຢາ**

(ກ) ເຄື່ອງໝາຍຫ້າມສູບຢາເປັນວົງມົນຂອບສີແດງ, ພື້ນສີຂາວ, ຄວາມໜາຂອງຂອບສີແດງແມ່ນ 1 ສ່ວນ 10 ຂອງຂະໜາດເສັ້ນຜ່າສູນກາງ ແລະຂະໜາດວົງມົນຕ່ຳສຸດບໍ່ໃຫ້ຫຼຸດ 10 ຊັງຕີແມັດ ໂດຍມີຮູບກອກຢາ ແລະມີຄວັນສີດຳຢູ່ໃຈກາງ ແລະເສັ້ນສີແດງພາດທັບກອກຢາຈາກຂອບເທິງກ້ຳຊ້າຍຫາຂອບລຸ່ມກ້ຳຂວາ. ຄວາມຍາວຂອງກອກຢາສູບຕ້ອງບໍ່ຕ່ຳກວ່າ 2 ສ່ວນ 3 ຂອງຂະໜາດວົງມົນ.

(ຂ) ປ້າຍຫ້າມສູບຢາຕ້ອງມີເຄື່ອງໝາຍຫ້າມສູບຢາ ແລະມີຂໍ້ຄວາມ **"ຫ້າມສູບຢາ"**, **"ຂອບໃຈທີ່ທ່ານບໍ່ສູບຢາ"**, ເປັນພາສາອັງກິດ "No Smoking" ຫຼື "Thank you for Not Smoking" ເປັນຕົວອັກສອນສີດຳ.

(ຄ) ສຳລັບປ້າຍທີ່ມີຂະໜາດ 10 ຊັງຕີແມັດ ມີຂໍ້ຄວາມ ຫຼື ບໍ່ມີຂໍ້ຄວາມກໍ່ໄດ້.

(ງ) ສະຖານທີ່ຕິດເຄື່ອງໝາຍໃນເຂດຫ້າມສູບຢາຕ້ອງຕິດໄວ້ຢູ່ບ່ອນເປີດເຜີຍ, ເຫັນໄດ້ງ່າຍ ແລະ ຈະແຈ້ງ ຢູ່ສະຖານທີ່ ທີ່ກຳນົດໄວ້ໃນມາດຕາ 3 ຂອງຂໍ້ກຳນົດສະບັບນີ້ ຢູ່ທາງເຂົ້າ ຫຼື ໃນສະຖານທີ່ທີ່ເໝາະສົມ.

## ໝວດທີ 3
## ຂໍ້ຫ້າມກ່ຽວກັບຢາສູບ

**ມາດຕາ 5. ຂໍ້ຫ້າມສໍາລັບຜູ້ດໍາເນີນທຸລະກິດຢາສູບ**

ຫ້າມຜູ້ດໍາເນີນທຸລະກິດຢາສູບ ມີການກະທໍາ ດັ່ງນີ້:

1. ຫ້າມໂຄສະນາໃນທຸກຮູບແບບ ເພື່ອເປັນການຊຸກຍູ້ສົ່ງເສີມການສູບຢາ, ການຈໍາໜ່າຍ ແລະການຊື້-ຂາຍ ຜະລິດຕະພັນຢາສູບ;
2. ຫ້າມຊື້-ຂາຍ ຜະລິດຕະພັນຮຽນແບບຜະລິດຕະພັນຢາສູບ;
3. ຫ້າມຂາຍ ຫຼື ຈໍາໜ່າຍ ຜະລິດຕະພັນຢາສູບ ໃນສະຖານທີ່ທີ່ກໍານົດໄວ້ໃນມາດຕາ 3 ຂອງຂໍ້ກໍານົດສະບັບນີ້;
4. ຫ້າມເດັກທີ່ມີອາຍຸຕໍ່າກວ່າ ສິບແປດ ປີ ຊື້-ຂາຍຢາສູບ;
5. ຫ້າມອຸປະຖໍາໃນກິດຈະກໍາຕ່າງໆ ເຊັ່ນ: ງານບຸນປະເພນີ, ກິລາ, ສິນລະປະ, ວັດທະນະທໍາ ແລະ ສັງຄົມຕ່າງໆ.

**ມາດຕາ 6. ຂໍ້ຫ້າມສໍາລັບບຸກຄົນ ແລະການຈັດຕັ້ງ**

ຫ້າມບຸກຄົນ ແລະການຈັດຕັ້ງ ມີການກະທໍາ ດັ່ງນີ້:

1. ຫ້າມສະໜັບສະໜູນ ການໂຄສະນາ, ສົ່ງເສີມການຂາຍຜະລິດຕະພັນຢາສູບ ແລະຮັບເອົາການອຸປະຖໍາຈາກອຸດສາຫະກໍາຢາສູບ;
2. ຫ້າມສູບຢາໃນສະຖານທີ່ທີ່ເກືອດຫ້າມ;
3. ຫ້າມອະນຸຍາດໃຫ້ນໍາໃຊ້ສະຖານທີ່ທີ່ຕົນຮັບຜິດຊອບເປັນບ່ອນໂຄສະນາ, ສົ່ງເສີມການຂາຍຜະລິດຕະພັນຢາສູບ;
3. ຫ້າມອະນຸຍາດໃຫ້ມີການສູບຢາໃນຂອບເຂດສະຖານທີ່ທີ່ຕົນຮັບຜິດຊອບ, ໂດຍສະເພາະໃນສະຖານທີ່ທີ່ລະບຸໄວ້ໃນມາດຕາ 3 ຂອງຂໍ້ກໍານົດສະບັບນີ້.
4. ຫ້າມຊັກຊວນ, ນໍາໃຊ້ຜູ້ອື່ນ ເປັນຕົ້ນ ເດັກຕໍ່າກວ່າ ສິດແປດ ປີ ສູບຢາ, ຊື້-ຂາຍ ຜະລິດຕະພັນຢາສູບ.

## ໝວດທີ 4
## ການຄຸ້ມຄອງ ແລະກວດກາ
## ການຈັດໃຫ້ສະຖານທີ່ການສຶກສາ ແລະ ກິລາ ປອດຄວັນຢາສູບ

**ມາດຕາ 7. ການຄຸ້ມຄອງ ແລະກວດກາ**

ຂະແໜງການສຶກສາທິການ ແລະກິລາ ຄຸ້ມຄອງ ແລະກວດກາການຈັດໃຫ້ສະຖານທີ່ການສຶກສາປອດຄວັນຢາສູບຢ່າງລວມສູນ ແລະເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ຫ້ອງການກະຊວງສຶກສາທິການ ແລະກິລາ, ພະແນກສຶກສາທິການ ແລະກິລາແຂວງ, ນະຄອນຫຼວງ ແລະຫ້ອງການສຶກສາທິການ ແລະກິລາເມືອງ ເປັນໃຈກາງປະສານກັບຂະແໜງການອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 8. ຄະນະກຳມະການຄຸ້ມຄອງ ແລະກວດກາ**

ຄະນະກຳມະການຄຸ້ມຄອງ ແລະກວດກາ ການຈັດໃຫ້ສະຖານທີ່ການສຶກສາປອດຄວັນຢາສູບ ປະກອບດ້ວຍ:

- ຂັ້ນສູນກາງ: ຫ້ອງການກະຊວງສຶກສາທິການ ແລະກິລາ;
- ຂັ້ນທ້ອງຖິ່ນ: ຫ້ອງການບໍລິຫານຂອງພະແນກສຶກສາທິການ ແລະກິລາແຂວງ, ນະຄອນຫຼວງ ແລະຫ້ອງການສຶກສາທິການ ແລະກິລາເມືອງ.

## ໝວດທີ 5

## ສິດ ແລະໜ້າທີ່ ໃນການປົກປ້ອງສຸຂະພາບຂອງຜູ້ບໍ່ສູບຢາ

**ມາດຕາ 9. ສິດ ແລະໜ້າທີ່**

ຫົວໜ້າຫ້ອງການກະຊວງສຶກສາທິການ ແລະກິລາ, ຫົວໜ້າພະແນກສຶກສາທິການ ແລະກິລາແຂວງ, ນະຄອນຫຼວງ, ອຳນວຍການໂຮງຮຽນ, ຫົວໜ້າ ສະຖານທີ່ຕ່າງໆ ທີ່ລະບຸໄວ້ໃນມາດຕາ 3 ຂອງຂໍ້ກຳນົດສະບັບນີ້ ມີສິດ ແລະໜ້າທີ່ ດັ່ງນີ້:

1. ສິດ

   ກ. ອອກກົດລະບຽບພາຍໃນກ່ຽວກັບການຫ້າມສູບຢາ.

   ຂ. ຄວບຄຸມ ແລະຕິດຕາມ ການຈັດຕັ້ງປະຕິບັດ ຂໍ້ກຳນົດສະບັບນີ້ ຢ່າງມີປະສິດທິພາບ.

   ຄ. ປະຕິບັດມາດຕະການທີ່ເໝາະສົມ ຕໍ່ຜູ້ລະເມີດ.

2. ໜ້າທີ່

   ກ. ໂຄສະນາເຜີຍແຜ່ຂໍ້ກຳນົດ ແລະລະບຽບການກ່ຽວກັບວຽກງານຄວບຄຸມຢາສູບ.

   ຂ. ປຸກລະດົມຂົນຂວາຍ, ຈັດຕັ້ງຂະບວນການຫ້າມສູບຢາ ແລະສະຫຼຸບຕີລາຄາປະເມີນຜົນ ແລະລາຍງານໃຫ້ຂັ້ນເທິງແຕ່ລະໄລຍະ.

   ຄ. ແນະນຳ-ກ່າວເຕືອນ ເດັກ, ເຍົາວະຊົນ ແລະຜູ້ຢູ່ໃຕ້ການຄຸ້ມຄອງຂອງຕົນບໍ່ໃຫ້ສູບຢາ.

໑. ຈັດໃຫ້ຂະແໜງການສຶກສາທິການ ແລະກິລາ ທັງໝົດເປັນເຂດຫ້າມສູບຢາພ້ອມທັງຕິດເຄື່ອງໝາຍ ຫຼື ປ້າຍ, ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 4 ຂໍ້ 1 ຂອງຂໍ້ກໍານົດສະບັບນີ້

## ໝວດທີ 6

## ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

### ມາດຕາ 10. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດຂໍ້ກໍານົດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນຕາມຄວາມເໝາະສົມ.

### ມາດຕາ 11. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຕໍ່ຂໍ້ກໍານົດສະບັບນີ້ ຈະຖືກສຶກສາອົບຮົມ ແລະປັບໃໝ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ດັ່ງນີ້:

- ສໍາລັບສະຖານທີ່ ເຊິ່ງໄດ້ລະບຸໄວ້ໃນມາດຕາ 3 ທີ່ບໍ່ປະຕິບັດຕາມຂໍ້ກໍານົດສະບັບນີ້ ຈະຖືກປະຕິບັດມາດຕະການດັ່ງຕໍ່ໄປນີ້:
  - ຄັ້ງທີ 1: ກ່າວເຕືອນ
  - ຄັ້ງທີ 2: ກ່າວເຕືອນເປັນລາຍລັກອັກສອນ ແລະເຜີຍແຜ່ໃຫ້ຮັບຊາບ
- ສໍາລັບບຸກຄົນທີ່ສູບຢາໃນບ່ອນທີ່ຫ້າມສູບຢາ ຈະຖືກປະຕິບັດມາດຕະການດັ່ງຕໍ່ໄປນີ້:
  - ຄັ້ງທີ 1: ສຶກສາອົບຮົມ ແລະກ່າວເຕືອນ
  - ຄັ້ງທີ 2: ກ່າວເຕືອນເປັນລາຍລັກອັກສອນ ພ້ອມທັງແຈ້ງໃຫ້ການຈັດຕັ້ງຮັບຊາບ.
- ສ່ວນມາດຕະການປັບໃໝຈະມີລະບຽບການສະເພາະຕ່າງຫາກ

## ໝວດທີ 7

## ບົດບັນຍັດສຸດທ້າຍ

### ມາດຕາ 12. ການຈັດຕັ້ງປະຕິບັດ

ມອບໃຫ້ຫ້ອງການກະຊວງສຶກສາທິການ ແລະກິລາ, ພະແນກສຶກສາທິການ ແລະກິລາແຂວງ, ນະຄອນຫຼວງ, ຫ້ອງການສຶກສາທິການ ແລະກິລາເມືອງ, ຄະນະອໍານວຍການໂຮງຮຽນ, ສະຖານທີ່ຕ່າງໆ ທີ່ລະບຸໄວ້ໃນມາດຕາ 3 ຂອງຂໍ້ກໍານົດສະບັບນີ້ ແລະຄະນະກໍາມະການວ່າດ້ວຍການຈັດສະຖານທີ່ການສຶກສາປອດຄວັນຢາສູບ ເຜີຍແຜ່ຂະຫຍາຍ ແລະຈັດຕັ້ງປະຕິບັດ ຂໍ້ກໍາ

ນິດສະບັບນີ້ ຢ່າງມີປະສິດທິຜົນ, ໂດຍປະສານສົມທົບກັບພາກສ່ວນຕ່າງໆ ແລະ ອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

### ມາດຕາ 13. ຜົນສັກສິດ

ຂໍ້ກຳນົດສະບັບນີ້ ມີຜົນບັງຄັບໃຊ້ໄດ້ຕັ້ງແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ. ຂໍ້ກຳນົດ ແລະ ເອກະສານໃດ ທີ່ຂັດກັບເນື້ອໃນຂອງຂໍ້ກຳນົດສະບັບນີ້ລ້ວນແຕ່ຖືກລົບລ້າງ.

ຕ, ລັດຖະມົນຕີວ່າການ

ກະຊວງສຶກສາທິການ ແລະ ກິລາ

ລັດຖະມົນຕີ

ລີຕູ ບົວປາວ